ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານ ນະໂຍບາຍ

ສຳນັກງານໃຫ່ຍ

ເລກທີ 68 ຄພຄ.ທນບ

ນະຄອນຫລວງວຽງຈັນ , ວັນທີ : 27 / 8 / 2018

# ຄຳແນະນຳ

**ຮຽນ** : ທ່ານ ຫົວໜ້າ ສາຂາ ແລະ ໜ່ວຍບໍລິການ ທົ່ວລະບົບ.

**ເລື່ອງ** : ການສັງລວມ file Excel ຈັບຄູ່ບັນຊີດອກເບັ້ຍຄ້າງຮັບ(ໃນຜັງ - ນອກຜັງ ) ກັບ ບັນຊີເງິນຝາກກະແສລາຍວັນ ຂອງລູກຄ້າ

- ອີງຕາມ ຄວາມຮຽກຕ້ອງການ ເພື່ອຮັບໃຊ້ວຽກງານວິຊາສະເພາະ ແລະ ເປັນເອກະພາບກັນໃນການຈັດຕັ້ງປະຕິບັດ ທົ່ວລະບົບ.

ຄະນະຮັບຜິດຊອບ ຄຳແບ້ງຄິງ ອອກຄຳແນະນຳ ມາຍັງບັນດາທ່ານ ຊາບ : ການສັງລວມ file Excel ຈັບຄູ່ບັນຊີດອກເບັ້ຍຄ້າງຮັບ (ໃນຜັງ - ນອກຜັງ ) ກັບ ບັນຊີເງິນຝາກກະແສລາຍວັນ ຂອງລູກຄ້າ ເພື່ອຮອງຮັບເຄື່ອງມືການໂອນລ້າງດອກເບັ້ຍແບບໂອໂຕ ໃນລະບົບ Bank 2009 ໃຫ້ມີຄວາມສະດວກ , ວ່ອງໄວ ແລະ ຮັບປະກັນຄວາມຖືກຕ້ອງຊັດເຈນ ມີລາຍລະອຽດດັ່ງນີ້ : (ມີຕະຕະລາງຄັດຕິດມາພ້ອມນັ້ນ )

1 ໃຫ້ພະນັກງານບັນຊີ ຂັ້ນສາຂາ ແລະ ໜ່ວຍບໍລິການ ເປັນຜູ້ປ້ອນຂໍ້ມູນບັນຊີໃສ່ file Excel ການຈັບຄູ່ບັນຊີດອກເບັ້ຍຄ້າງຮັບ ໃນຜັງ ( 120, 128, 1297 ) ແລະ ນອກຜັງ (99041) ກັບ ບັນຊີເງິນຝາກກະແສລາຍວັນ (22011) ຂອງລູກຄ້າທັງໝົດຄຽງຄູ່ກັນ ໃຫ້ຖືກຕ້ອງກົງກັນທາງດ້ານເລກໝາຍບັນຊີ ແລະ ຊື່ບັນຊີ ຕາມແບບຟອມກຳນົດໄວ້ ເປັນປະຈຳທຸກ ໆ ເດືອນໃນລະບົບ Bank 2009

2 ສຳລັບດອກເບັ້ຍຄ້າງຮັບນອກຜັງທີ່ເກີດຈາກໜີ້ບ້ວງເກົ່າໂອນມາຈາກ ທສກ (9902) ທີ່ໄດ້ໂອນໄປຕິດຕາມເບື້ອງ GL ໃນລະບົບຄຳແບ້ງຄິງນັ້ນ ແມ່ນບໍ່ໄດ້ຈັບຄູ່ , ກໍລະນີມີການຊຳລະ ໃນເບື້ອງຄຳແມ່ນໃຫ້ຊຳລະ ຜ່ານທຸລະກຳພາຍໃນ

3 ການຈັດຕັ້ງປະຕິບັດ

- ໃຫ້ສຳເລັດໃນວັນທີ 29 ສິງຫາ 2018 ເພື່ອເປັນບ່ອນອີງໃນການໂອນລ້າງດອກເບັ້ຍຄ້າງຮັບແບບໂອໂຕໃນທ້າຍເດືອນ ສິງຫາ 2018
- ການສັງລວມຕິດຕາມການຈັບຄູ່ດອກເບັ້ຍຄ້າງຮັບ ກັບ ບັນຊີເງິນຝາກກະແສລາຍວັນແມ່ນໃຫ້ປະຕິບັດເປັນປະຈຳທຸກ ໆ ເດືອນ ຈົນກ່ວາ ສຳນັກງານໃຫ່ຍຈະແຈ້ງການໃຫ້ຢຸດຕິ
- ຖ້າຫາກບໍ່ເຂົ້າໃຈແຈ້ງໃຫ້ປະສານກັບ ທີມພັດທະນາຄຳແບ້ງຄິງ ສຳນັກງານໃຫ່ຍໂດຍກົງ

(ມີຕະຕະລາງຄັດຕິດມາພ້ອມນັ້ນ )

ດັ່ງນັ້ນ , ຈຶ່ງອອກຄຳແນະນຳ ສະບັບນີ້ມາຍັງທ່ານ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ

ຄະນະຮັບຜິດຊອບ

ຄຳສະຫວັດ ອິນທະວົງ

# ຮ່າງຕາຕະລາງຈັບຄູ່ດອກເບ້ຍຄ້າງຮັບ( ໃນຜັງ - ນອກຜັງ ) ຄູ່ກັບບັນຊີເງິນຝາກກະແສລາຍວັນ

| ລຳດັບ | ເລກບັນຊີດອກເບ້ຍຄ້າງ( ໃນຜັງ ) | ເລກບັນຊີດອກເບ້ຍຄ້າງ( ນອກຜັງ ) | ເລກບັນຊີເງິນຝາກກະແສລາຍວັນ |
|---|---|---|---|
| 1 | 0502-00-1203783.84.01000001 | | 0502-00-2201100.84.01000001 |
| 2 | 0502-00-1286710.65.01000001 | | 0502-00-2201100.65.01000001 |
| 3 | 0502-00-1297131.84.01000001-001 | 0502-00-9904141.84.01000001-001 | 0502-00-2201100.84.01000011-001 |
| 4 | 0502-00-1297132.84.01000002-001 | 0502-00-9904142.84.01000002-001 | 0502-00-2201100.84.01000022-001 |
| | | | |
| | | | |
| | | | |
| | | | |
| | | | |
| | | | |
| | | | |
| | | | |
| | | | |
| | | | |
| | | | |
| | | | |
| | | | |
| | | | |
| | | | |
| | | | |
| | | | |